ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສໍາພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ກອງປະຊຸມຄະນະກໍາມະການນະໂຍບາຍເງິນຕາ ຂອງສະພາບໍລິຫານ ທະນາຄານແຫ່ງ ສປປ ລາວ ຄັ້ງທີ I ປະຈໍາປີ 2026






ໃນຕອນເຊົ້າວັນທີ 20 ກຸມພາ 2026, ທີ່ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດກອງປະຊຸມຄະນະກໍາມະການນະໂຍບາຍເງິນຕາ ຄັ້ງທີ I ປະຈໍາປີ 2026 ໂດຍການເປັນປະທານຂອງທ່ານ ນາງ ບຸນລໍາ ວໍລະຈິດ ຜູ້ວ່າການ, ປະທານຄະນະກໍາມະການນະໂຍບາຍເງິນຕາ ທຫລ, ມີຮອງປະທານ, ຄະນະກໍາມະການ, ບັນດາທ່ານຮອງຜູ້ວ່າການ, ຄະນະກົມ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງກອງປະຊຸມແມ່ນເພື່ອປະເມີນຜົນການຈັດຕັ້ງປະຕິບັດມະຕິ ຂອງຄະນະກໍາມະການນະໂຍບາຍເງິນຕາ ຄັ້ງທີ IV ປະຈໍາປີ 2025, ຜົນການຈັດຕັ້ງປະຕິບັດບັນດາເຄື່ອງມືນະໂຍບາຍເງິນຕາ ແລະ ທິດທາງການດໍາເນີນນະໂຍບາຍເງິນຕາໃນຕໍ່ໜ້າ ຂອງ ທຫລ. ພ້ອມນັ້ນ, ກອງປະຊຸມຍັງໄດ້ຮັບຟັງການລາຍງານການຄຸ້ມຄອງເງິນຕາຕ່າງປະເທດ, ການຄຸ້ມຄອງໜີ້ສິນຕໍ່ຕ່າງປະເທດ, ການຄຸ້ມຄອງລາຄາສິນຄ້າ; ນະໂຍບາຍການຄ້າສາກົນ ແລະ ນະໂຍບາຍສົ່ງເສີມການສົ່ງອອກ.

ຜ່ານການສັງເກດຕີລາຄາ ຂອງຄະນະກໍາມະການນະໂຍບາຍເງິນຕາ ເຫັນວ່າ: ໃນທ່າມກາງສິ່ງທ້າທາຍຈາກປັດໄຈພາຍນອກ ທີ່ຍັງບໍ່ທັນມີຄວາມແນ່ນອນ ແລະ ຜັນແປໄປຢ່າງສັບສົນ ເປັນຕົ້ນ ດ້ານພູມສາດການເມືອງ, ດ້ານເສດຖະກິດການເມືອງ ຂອງປະເທດມະຫາອໍານາດ ຊຶ່ງຄາດຄະເນໄດ້ຍາກ ແລະ ມີຜົນຕໍ່ການເໜັງຕີງຂອງລາຄານໍ້າມັນເຊື້ອໄຟ, ພະລັງງານ, ລາຄາຄໍາ ແລະ ລາຄາສະບຽງອາຫານ. ຜົນກະທົບເຫຼົ່ານັ້ນ, ຈະເຮັດໃຫ້ການຂະຫຍາຍຕົວຂອງເສດຖະກິດໂລກ ຄາດວ່າຈະຊ້າລົງ, ການປັບຫຼຸດອັດຕາດອກເບ້ຍນະໂຍບາຍລົງໃນປີ 2026 ເນື່ອງຈາກອັດຕາເງິນເຟີ້ ຄາດວ່າຈະຫຍັບເຂົ້າສູ່ເປົ້າໝາຍທີ່ຕັ້ງໄວ້ ຂອງບັນດາປະເທດເສດຖະກິດໃຫຍ່, ບວກກັບປັດໄຈພາຍໃນ ໂດຍສະເພາະພື້ນຖານເສດຖະກິດພາຍໃນບໍ່ທັນເຂັ້ມແຂງ, ຄວາມຕ້ອງການເງິນຕາຕ່າງປະເທດເພື່ອຊໍາລະໜີ້ສິນຕໍ່ຕ່າງປະເທດຍັງສູງ, ຄວາມຜັນຜວນຂອງອັດຕາແລກປ່ຽນ, ການສະໜອງສິນເຊື່ອຂອງລະບົບທະນາຄານ ເຂົ້າໃນເສດຖະກິດແຫ່ງຊາດ ຍັງບໍ່ສອດຄ່ອງກັບເປົ້າໝາຍດ້ານໂຄງປະກອບເສດຖະກິດ. ເຖິງແມ່ນວ່າ ສະພາບເສດຖະກິດຈະໄດ້ຮັບຜົນ

ກະທົບຈາກປັດໄຈພາຍນອກ ແລະ ພາຍໃນ, ແຕ່ດ້ວຍການກຳນົດທິດທາງ ແລະ ການດຳເນີນນະໂຍບາຍຂອງຫຼາຍພາກສ່ວນ ໄດ້ສະໜັບສະໜູນຊຶ່ງກັນ ແລະ ກັນ ຈຶ່ງເຫັນໄດ້ວ່າທ່າອ່ຽງອັດຕາເງິນເຟີ້ ຍັງຄາດວ່າຈະຢູ່ໃນລະດັບຕ່ຳປະມານ 5%. ສະນັ້ນ, ເພື່ອຮັກສາສະຖຽນລະພາບທາງດ້ານເງິນຕາ ໃຫ້ໝັ້ນທ່ຽງ, ຄະນະກຳມະການນະໂຍບາຍເງິນຕາ ຈຶ່ງເຫັນດີຮັບຮອງເອົາທິດທາງ ແລະ ມາດຕະການ ໃນການດຳເນີນນະໂຍບາຍເງິນຕາໃນຕໍ່ໜ້າ ດັ່ງນີ້: 1. ເຫັນດີປັບຫຼຸດອັດຕາດອກເບ້ຍພື້ນຖານຂອງ ທຫລ ສະກຸນເງິນກີບ ໄລຍະ 7 ວັນ ລົງ 0.5% ຈາກ 8.5% ຕໍ່ປີ ມາເປັນ 8% ຕໍ່ປີ; 2. ເຫັນດີຕໍ່ທິດທາງການຄຸ້ມຄອງມະຫາພາກດ້ານເງິນຕາ ປະຈຳປີ 2026 ໂດຍສະເພາະການດຳເນີນນະໂຍບາຍເງິນຕາແບບປະສົມປະສານ ແລະ ນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ ໂດຍສະເພາະ ການທົບທວນ ແລະ ປັບປຸງກົນໄກເຄື່ອງມືນະໂຍບາຍເງິນຕາ ເປັນຕົ້ນ: ອັດຕາດອກເບ້ຍ, ອັດຕາສ່ວນເງິນແຮຝາກບັງຄັບ, ການອອກ ແລະ ຈຳໜ່າຍພັນທະບັດໄລຍະສັ້ນ ຂອງ ທຫລ, ການຕິດຕາມການເໜັງຕີງຂອງອັດຕາແລກປ່ຽນ ໃນແຕ່ລະໄລຍະ ເພື່ອບໍ່ໃຫ້ກະທົບຕໍ່ອັດຕາເງິນເຟີ້;

ເຫັນດີຕໍ່ກັບທິດທາງການປະຕິບັດນະໂຍບາຍສະໜັບສະໜູນ ແລະ ນະໂຍບາຍກະຕຸ້ນເສດຖະກິດ ເປັນຕົ້ນ: 1. ທິດທາງການເຄື່ອນໄຫວວຽກງານຄຸ້ມຄອງເງິນຕາຕ່າງປະເທດໃນຕໍ່ໜ້າ ໃຫ້ເປັນລະບົບຄົບຊຸດ ແລະ ຮັບປະກັນໄດ້ການຄຸ້ມຄອງກະແສເງິນໄຫຼເຂົ້າ-ອອກ ຈາກການຄ້າ ແລະ ການລົງທຶນ, ພ້ອມທັງເລັ່ງປັບປຸງລະບົບຄຸ້ມຄອງກະແສເງິນຕາຕ່າງປະເທດ (CMS) ໃຫ້ສຳເລັດ ແລະ ໃຫ້ເລີ່ມນຳໃຊ້ໃນເດືອນ ມີນາ 2026; 2. ສືບຕໍ່ປະຕິບັດການລວມສູນບັນຊີເງິນຝາກຂອງລັດຖະບານ ໂດຍມອບໃຫ້ກົມຄຸ້ມຄອງທະນາຄານທຸລະກິດ ສົມທົບກັບກົມກ່ຽວຂ້ອງ ແລະ ກະຊວງການເງິນໃນການປະຕິບັດບັນຊີລວມສູນຄັງເງິນ (TSA) ໃຫ້ດີຂຶ້ນ ໂດຍສະເພາະ ການປະຕິບັດການໂອນເງິນເຂົ້າມາ ທຫລ ພາຍໃນມື້ຖັດໄປ (T+1) ເພື່ອບໍ່ໃຫ້ເງິນຄ້າງຢູ່ບັນຊີ ທະນາຄານທຸລະກິດຕົວແທນ; 3. ນະໂຍບາຍສິນເຊື່ອ ເພື່ອກະຕຸ້ນເສດຖະກິດ; 4. ມາດຕະການຄຸ້ມຄອງລາຄາສິນຄ້າ ໃຫ້ມີຄວາມຄ່ອງຕົວ, ໃນນັ້ນ ໃຫ້ສືບຕໍ່ຄົ້ນຄວ້າການສ້າງຕະຫຼາດປະມູນສິນຄ້າ ແລະ ກຳນົດໂຄງສ້າງລາຄາລາຍການສິນຄ້າທີ່ມີຄວາມຈຳເປັນຕໍ່ການດຳລົງຊີວິດ. ທຫລ ແລະ ບັນດາກະຊວງກ່ຽວຂ້ອງ ຈະໄດ້ສືບຕໍ່ເຮັດວຽກຮ່ວມກັນ, ປະສານງານ ແລະ ແລກປ່ຽນຂໍ້ມູນ ເປັນປົກກະຕິ ແລະ ຕໍ່ເນື່ອງ ເພື່ອໃຫ້ກຳໄດ້ສະພາບ ແລະ ວາງທິດທາງນະໂຍບາຍໃຫ້ສອດຄ່ອງກັນ.

ກອງປະຊຸມດັ່ງກ່າວໄດ້ດຳເນີນເປັນເວລາເຄິ່ງວັນ, ຜູ້ເຂົ້າຮ່ວມໄດ້ປຶກສາຫາລືແລກປ່ຽນຄວາມຄິດເຫັນຢ່າງກົງໄປກົງມາ ເຮັດໃຫ້ກອງປະຊຸມມີຜົນສຳເລັດຕາມລະດັບຄາດໝາຍທີ່ກຳນົດໄວ້ຢ່າງຈົບງາມ.



ກອງປະຊຸມດັ່ງກ່າວໄດ້ດຳເນີນເປັນເວລາເຄິ່ງວັນ, ຜູ້ເຂົ້າຮ່ວມກໍ່ໄດ້ປຶກສາຫາລືແລກປ່ຽນຄວາມຄິດເຫັນຢ່າງກົງໄປກົງມາ ເຮັດໃຫ້ກອງປະຊຸມປະສົບຜົນສຳເລັດຕາມລະດັບຄາດໝາຍທີ່ກຳນົດໄວ້ຢ່າງຈົບງາມ.

**ຂ່າວ: ກົມນະໂຍບາຍເງິນຕາ**
**ພາບ: ຫ້ອງການ ທຫລ**

ຢູ່ເມືອງລາວໃຊ້ເງິນກີບລາວ